ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento, CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ ມ໐໐/ປພຖຂ/໐໗໘ມ໑໐**

# ຖແຫຼງການ

## ຕອບໂຕ້ ທ່ານ ຫງຽມ ພົມມະຈັນ ຣັຖມົນຕຣີຊ່ວຍ ຕ່າງປະເທດ.

ພວກເຮົາ ປະຊາຊົນພັກ ແລະ ກຳລັງທັບເສຣີປະຊາທິປະໄຕລາວ ກໍຄືປະຊາຊົນລາວທັງຊາດ, ໄດ້ອອກຖແຫຼງການສບັບນີ້, ເພື່ອຕອບໂຕ້ທ່ານ ຫງຽມ ພົມມະຈັນ ຣັຖມົນຕຣີຊ່ວຍກະຊວງການຕ່າງປະເທດ ທີ່ອອກມາໂຄສະນາຊວນເຊື່ອ ເອົາຄົນລາວຢູ່ຕ່າງປະເທດ ເຂົ້າມາດັບງຽບ.

ທ່ານ ໃຫ້ສຳພາດວິທຍຸ VOA ໃນວັນທີ 17/8/10 ມີຈັຍຄວາມວ່າ "ຄົນລາວນອກປະເທດ ຜູ້ໃດຈະກັບຄືນປະເທດ ຕ້ອງປະຖິ້ມສັນຊາດ ທີ່ຕົນຖືຢູ່ໃນຕ່າງປະເທດແລະໃຫ້ຂໍເອົາສັນຊາດລາວຄືນໃໝ່, ພັກຣັດຈະໃຫ້ຄວາມສດວກ ໃນການເປັນເຈົ້າຂອງທີ່ດິນ ແລະໃນການທຳທຸຣະກິດຕ່າງໆຢູ່ລາວ".

ການອອກມາໂຄສະນາຊວນເຊື່ອຄັ້ງນີ້, ສຳລັບພວກເຮົາແລ້ວ, ເຫັນວ່າ"ບໍ່ມີຫຍັງໃໝ່ ຕື່ນເຕັ້ນ ແຕ່ຢ່າງໃດ" ເພາະພວກເຮົາ ໄດ້ອອກຖແຫຼງການ, ອອກບົດຄວາມ ຕອບໂຕ້ ມາແລ້ວ ຫລາຍຄັ້ງຫລາຍຫົນ!... ເປັນຕົ້ນ: ຕອບໂຕ້ນະໂຍບາຍ ຮຽກຮ້ອງເອົາຄົນລາວຢູ່ຕ່າງປະເທດ (No. 268), ຕອບໂຕ້ທ່ານ ບົວສອນ ໂຄສະນາຊວນເຊື່ອຄົນລາວ ມາເບິ່ງ ຊີເກມ (No. 280), ບົດຄວາມກ່ຽວກັບ ພົລເມືອງກິຕິມະສັກ ບໍ່ມີສິດທິທາງການເມືອງ(No. 279) ແລະບົດຄວາມກ່ຽວກັບ Visa 9 ເດືອນ ຄືເລ້ກິນໃໝ່ (No. 283) ດັ່ງນີ້ເປັນຕົ້ນ, ອອກຢູ່ໃນ website laofreedom.com ເປັນປະຈຳ.

ພັກຣັດ ພາກັນເວົ້າວ່າ "ຄົນລາວ ໜີໄປຢູ່ຕ່າງປະເທດ, ເປັນຄົນຄຽດງ່າຍຫາຍໄວ; ພຽງແຕ່ ອ້າງເອົາ ຜົນປໂຍດ ທີ່ພວກເຂົາຈະມີສ່ວນໄດ້ ມາເປັນເຍື່ອລໍ້, ຊື້ຈ້າງ ຈອບອອຍແລ້ວ.. .ຄວາມຄຽດແຄ້ນຕ່າງໆ ກໍຈະ ຈືດຈາງຫາຍໄປ... ແຕ່ຖ້າບໍ່ໄດ້ຜົນເທົ່າທີ່ຄວນ, ພັກຣັດ ກໍຈະ ເພີ້ມຄວາມເຄັ່ງ ເຂົ້າໃນການໂຄສະນາ ຊວນເຊື່ອ ຕື່ມຂຶ້ນອີກ, ເປັນຕົ້ນ: **ພັກຣັດ ກໍຈະປະກາດ ນະໂຍບາຍ ອະພັຍະໂທສ ໃຫ້ຄົນລາວ ທີ່ຢາກກັບຄືນປະເທດ, ທຸກຢ່າງ ກໍຈະສິ້ນສຸດລົງ.** ເມື່ອການກວາດຕ້ອນ ເອົາຄົນລາວນອກ ເຂົ້າມາຍອມຈຳນົນໝົດແລ້ວ, ຂບວນ ການຕໍ່ສູ້ ຂອງຄົນລາວ ນອກປະເທດ ທີ່ຍັງເຫລືອຢູ່ ກໍຈະໝົດໄປເອງ ແລະຜູ້ໃດ ສນັບສນຸນພວກເຂົາ ກໍຖືວ່າ ເປັນຜູ້ສນັບສນຸນ ກຸ່ມໂຈນຊ້າມຊາດ.

ຄວາມເຂົ້າໃຈຂອງຄນະພັກຣັດ ແມ່ນຜິດພາດທີ່ສຸດ!.. ຕຣົງກັນຂ້າມ, ສະພາບຄວາມເປັນຈິງ ຂອງການຕໍ່ສູ້ ຍິ່ງຈະແຈ້ງແລະທະວີຄູນຂຶ້ນຕື່ມ. ຜູ້ໃດມັກຣະບອບຜເດັດການ, ກໍຈະແລ່ນເຂົ້າມາ ຊົບຢູ່ ກ້ອງ ຂີ້ເຮື້ອຂອງພັກຣັດແລະຜູ້ໃດ ທີ່ຕ້ອງການມີສິດທິເສຣີພາບປະຊາທິປະໄຕ, ມີຄວາມຍຸຕິທັມໃນສັງຄົມ, ກໍຈະ ໂຮມກັນ ຕໍ່ສູ້ຢ່າງເດັດດ່ຽວໜຽວແໜ້ນ ຕາມແນວທາງສັນຕິວິທີ ພາຍໃຕ້ການນຳພາ ຂອງພວກເຮົາ ປະຊາຊົນພັກແລະກຳລັງທັບເສຣີປະຊາທິປະໄຕລາວ ກໍຄືປະຊາຊົນລາວທັງຊາດນັ້ນເອງ.

ສ່ວນການກ່າວຫາວ່າ "ພວກເຮົາ ເປັນກຸ່ມໂຈນຊ້າມຊາດນັ້ນ ກໍບໍ່ມີເຫດຜົນພຽງພໍ ທີ່ຈະໃຫ້ກຸ່ມພາຄີ 15 ປະເທດ ເຊື່ອຖືໄດ້, ເພາະຣາກເຫງົ້າ ການຕໍ່ສູ້ ຂອງພວກເຮົາ ແມ່ນມາຈາກ ຂບວນການຕໍ່ສູ້ ຂອງລາວອິສຣະ ໃນອາດີດ ເພື່ອ **ລາວ-ລວມ-ລາວ** ໃຫ້ເປັນອັນນຶ່ງອັນດຽວກັນ ຢ່າງແທ້ຈິງ!.. **ບໍ່ແມ່ນປະເພດ ຫົວເປັນແກວ,ແອວເປັນລາວ, ເທົ້າເປັນໄທຍ, ໃຈເປັນຈີນນັ້ນ ແຕ່ຢ່າງໃດເລີຍ**". ແຕ່ໃນເມື່ອ ພັກຣັດ ມາຂວາງທາງຢູ່, ແນ່ນອນ, ປະຊາຊົນລາວ ກໍຕ້ອງໄດ້ຊຸກຍູ້ ໃຫ້ຫລີກໜີໄປ, ກໍຄື: ໃຫ້ຢຸດຕິດ ໃຊ້ອຳນາດ ຜເດັດການພັກດຽວ ບໍຣິຫານປະເທດຊາດນັ້ນເອງ.

ພວກເຮົາ ຮຽກຮ້ອງມາຍັງພັກຣັດ, ຈົ່ງໄດ້ຢຸດຕິດ ໂຄສະນາຊວນເຊື່ອ ຈອບອອຍ ເອົາຄົນລາວ ນອກປະເທດ. ເຂົ້າມາດັບງຽບ ໃຫ້ເສັຽເວລາ, ເພາະບໍ່ແມ່ນການແກ້ໄຂ ຕົ້ນຕໍ ຂອງບັນຫາ!. ດຽວນີ້, ພັກຣັດ ໄດ້ຕົກເຂົ້າບ້ວງແຮ້ວຂອງນະໂຍບາຍ ແກ້ໄຂບັນຫາລາວ ຢ່າງສັນຕິຮອບດ້ານ, ຍ້ອນພັກຣັດ ເວົ້າແນວນຶ່ງ, ແຕ່ຊໍ້າພັດເຮັດໄປອີກແນວນຶ່ງ. ພັກຣັດ ບອກວ່າ ຮັກຊາດ, ຮັກປະຊາຊົນ. ແຕ່ໃນພາກປະຕິບັດແລ້ວ, ເຕັມໄປດ້ວຍປະກົດການ ຂາຍຊາດ ຂາຍປະຊາຊົນ, ມີການສໍ້ຣາດ-ບັງຫລວງ, ຄ້າມະນຸດ, ຄ້າຢາເສບຕິດ, ຄ້າໄມ້ເຖື່ອນ, ທຳລາຍສະພາບແວດລ້ອມ, ແລະບໍ່ເອົາໃຈໃສ່ ແກ້ໄຂ ເຍົາວະຊົນ ທີ່ມີບັນຫາ ດັ່ງນີ້ເປັນຕົ້ນ. ໃນທ້ອງເດືອນ ກໍຣະກະດາ ຜ່ານມານີ້, ຜູ້ຊ່ຽວຊານຂອງສະຫະຣັດ ກໍໄດ້ໄປກ່າວຄຳປາສັຍ ກ່ຽວກັບຣາກເຫງົ້າ ຂອງການສໍ້ຣາດ-ບັງຫລວງ ໃຫ້ພນັກງານ ກະຊວງ ການຕ່າງປະເທດ, ກະຊວງ ຍຸຕິທັມ ແລະນັກຮຽນ, ນັກສຶກສາ ເພື່ອໃຫ້ຮັບຮູ້, ເຂົ້າໃຈ ເຖິງພັຍອັນຕຣາຍ ແລະຜົນສະທ້ອນອັນໃຫຍ່ຫລວງ ມາສູ່ ການພັທນາປະເທດຊາດ. ຕ້ອງນຳເອົາ ຜູ້ກະທຳຜິດ ມາລົງໂທດ ຕາມຫລັກການສາກົນ!.

ດຽວນີ້, ອົງການຈັດຕັ້ງສາກົນ, ຕິດຕາມເສັນທາງການເງິນສ່ວນບຸກຄົນ, ຂອງຄນະພັກຣັດ ໄດ້ຢ່າງລະອຽດ ທີ່ສຸດ!. -ພັກຣັດ ມີກົດໝາຍປາບປາມ ການສໍ້ຣາດ-ບັງຫລວງ, ແຕ່ພັກຣັດ ບໍ່ສາມາດນໍາເອົາຜູ້ກະທໍາຜິດມາລົງໂທສໄດ້... ແນ່ນອນ, ອົງການຈັດຕັ້ງສາກົນ ກໍຈະທໍາໜ້າທີ່ ຂອງພວກເຂົາ, ນໍາເອົາຜູ້ກະທໍາຜິດ ມາລົງໂທດ, ເພາະເງິນທີ່ພັກຣັດ ສໍ້ໂກງເອົາໄປນັ້ນ ເປັນເງິນຂອງ ປະຊາຊົນ ເປັນຊັພສິນ ຂອງຊາດ ແລະພັກຣັດ ກໍໜີບໍ່ພົ້ນຄວາມຈິງໄປໄດ້, ຖ້າບໍ່ມີພວກເຮົາ ປະຊາຊົນ ພັກແລະກໍາລັງທັບເສຣີປະຊາ ທິປະໄຕລາວ ກໍຄືປະຊາຊົນລາວທັງຊາດເຂົ້າມາຊ່ວຍກັນແກ້ໄຂ. ສັ້ນ, ພັກຣັດ ຕ້ອງອອກມາໂອ້ລົມ ກັບ ພວກເຮົາໂດຍໄວ, ໃຫ້ເປັນໄປຕາມທີ່ໄດ້ຮັບເງື່ອນໄຂ ຈາກກຸ່ມພາຄີ 15 ປະເທດມາແລ້ວນັ້ນ, ບັນຫາທຸກຢ່າງ ກໍຈະຖືກແກ້ໄຂ ໃຫ້ລຸລ່ວງໄປໄດ້ດ້ວຍດີ, ກ່ອນທີ່ພັກຣັດ ຈະໝົດໂອກາດ.

ປະຊາຊົນມີໄຊຍ໌ ເສຣີປະຊາທິປະໄຕອົງອາດ ຊາດລາວຈົ່ງຈເຣີນ.

ຂໍຂອບໃຈ

**ສູນກາງຕາງໜ້າ**

**ພັກ ແລະກໍາລັງທັບເສຣີປະຊາທິປະໄຕລາວ**

**ຫ້ອງປະທານພັກ**

**ອາຈານ ສົມນຶກ ຟອງສູວັນ**

**ວັນທີ ໒໕ ສິງຫາ ໒໐໑໐.**